# ບົດຂ່າວ

## ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ສຳເລັດກອງປະຊຸມສະພາບໍລິຫານ ປະຈຳໄຕມາດ 1 ປີ 2022 ດ້ວຍຜົນສຳເລັດອັນຈົບງາມ

ກອງປະຊຸມສະພາບໍລິຫານ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ປະຈຳໄຕມາດ 1 ປີ 2022 ໄດ້ຈັດຂຶ້ນໃນຕອນບ່າຍຂອງວັນພະຫັດ ວັນທີ 24 ກຸມພາ 2022 ທີ່ແຂວງຫລວງພະບາງ ໂດຍການເປັນປະທານຂອງທ່ານ ນ. ວັດທະນາ ດາລາລອຍ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ປະທານສະພາບໍລິຫານ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ, ມີຮອງປະທານສະພາບໍລິຫານ ແລະ ສະມາຊິກສະພາບໍລິຫານ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວທັງໝົດ ພ້ອມດ້ວຍຄະນະຜູ້ອຳນວຍການ ແລະ ພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.





ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້ແມ່ນເພື່ອ ສະຫຼຸບການເຄື່ອນໄຫວວຽກງານຂອງ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ປະຈຳປີ 2021, ຜ່ານແຜນດຳເນີນທຸລະກິດ ແລະ ແຜນງົບປະມານ ປະຈຳປີ 2022 ແລະ ປຶກສາຫາລືກ່ຽວກັບແຜນການປັບປຸງໂຄງສ້າງຂອງ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ.





ຜ່ານມາ ບໍລິສັດແມ່ນມີຜົນສຳເລັດດ້ານວຽກງານທີ່ພົ້ນເດັ່ນເປັນຕົ້ນ: ໄດ້ສະໜອງການບໍລິການຂໍ້ມູນຂ່າວສານສິນເຊື່ອແບບທັນທີ (Online) ໃຫ້ແກ່ສະມາຊິກໄດ້ຈຳນວນ 260.629 ລາຍການ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 14 %. ຊຶ່ງໃນແຜນການດຳເນີນທຸລະກິດໃນປີ 2022 ໄດ້ຕັ້ງເປົ້າໝາຍໄວ້ຄື: ເຜີຍແຜ່ຜະລິດຕະພັນການໃຫ້ຄະແນນສິນເຊື່ອບຸກຄົນ ເພື່ອໃຫ້ບໍລິການແກ່ສະມາຊິກ, ບຸກຄົນ, ນິຕິບຸກ ຄົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃຫ້ກ້ວາງຂວາງຍິ່ງຂຶ້ນ, ປັບປຸງໂຄງສ້າງບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ; ເຄື່ອນໄຫວເກັບກຳຂໍ້ມູນທີ່ຕິດພັນເຂົ້າຖານຂໍ້ມູນໃຫ້ຄົບຖ້ວນ ເພື່ອສ້າງ ແລະ ປັບປຸງຜະລິດ ຕະພັນຮັບປະກັນ ການບໍລິການຂໍ້ມູນຂ່າວສານສິນເຊື່ອທີ່ມີຄຸນນະພາບໃຫ້ແກ່ສັງຄົມ; ຊຸກຍູ້ການເຂົ້າເປັນສະມາຊິກຂອງສະຖາບັນການເງິນໃຫ້ຫຼາຍຂຶ້ນໄປຄຽງຄູ່ກັບການໃຫ້ບໍລິການຂໍ້ມູນຂ່າວສານສິນເຊື່ອ ເພື່ອສ້າງລາຍຮັບໃນປີ 2022ບໍ່ໃຫ້ລຸດ 393 ລ້ານກີບ.




ບົດຂ່າວ ແລະ ພາບໂດຍ: ພະແນກບໍລິຫານ ແລະ ສັງລວມ (ຂສລ)